**ບົດບັນທຶກຄວາມເຂົ້າໃຈ**

**ລະຫວ່າງ**

**ກະຊວງຊາວໜຸ່ມ ແລະ ກິລາ ແຫ່ງ ສາທາລະນະລັດ ອິນໂດເນເຊຍ**

**ແລະ**

**ຄະນະກຳມະການກິລາ-ກາຍະກຳແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນຂົງເຂດວຽກງານການກິລາ**

-----------------

ກະຊວງຊາວໜຸ່ມ ແລະ ກິລາ ແຫ່ງ ສາທາລະນະລັດ ອິນໂດເນຍເຊຍ ແລະ ຄະນະກຳມະການ ກິລາ-ກາຍະກຳແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຊຶ່ງຕໍ່ໄປນີ້ເອີ້ນວ່າ "ຄູ່ສັນຍາ".

ດ້ວຍຄວາມປາຖະໜາເປີດກ້ວາງ ແລະ ພັດທະນາການພົວພັນຮ່ວມມືສອງຝ່າຍ ລະຫວ່າງ ລັດຖະບານ ແລະ ປະຊາຊົນ ຂອງສອງປະເທດ ໃນຂົງເຂດວຽກງານການກິລາ ແລະ ກາຍະກຳ.

ອີງຕາມສັນຍາ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ອິນໂດເນເຊຍ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ດ້ານການຮ່ວມມືຂົງເຂດເສດຖະກິດເຕັກນິກ ທີ່ໄດ້ລົງນາມໃນວັນທີ 18 ຕຸລາ 1994 ທີ່ ນະຄອນຫລວງຈາກາກຕາ.

ໂດຍເຄົາລົບນັບຖືກົດໝາຍ ແລະ ກົດລະບຽບຕ່າງໆຂອງແຕ່ລະປະເທດຄູ່ສັນຍາ,

ສອງຝ່າຍຈຶ່ງໄດ້ຕົກລົງດັ່ງນີ້:

**ມາດຕາ01**

**ຈຸດປະສົງຂອງການຮ່ວມມື**

ຈຸດປະສົງຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້ ແມ່ນເພື່ອພັດທະນາການຮ່ວມມືສອງຝ່າຍໃນຂົງເຂດ ກິລາ ບົນພື້ນຖານການເຄົາລົບນັບຖືເຊິ່ງກັນ ແລະ ກັນ, ຄວາມສະເໝີພາບ ແລະ ຕ່າງຝ່າຍຕ່າງມີ ຜົນປະໂຫຍດ ເພື່ອພັດທະນາໃນຂົງເຂດການກິລາກາຍະກຳຂອງທັງສອງປະເທດ.

**ມາດຕາ02**

**ຂົງເຂດຂອງການຮ່ວມມື**

ຄູ່ສັນຍາຈະຕ້ອງສົ່ງເສີມແລະອຳນວຍຄວາມສະດວກຕ່າງໆ ໃນການຮ່ວມມືໃນຂົງເຂດວຽກງານຕ່າງໆ ດັ່ງນີ້:

1. ແລກປ່ຽນທັດສະນະ ກ່ຽວກັບ ວຽກງານການກິລາສາກົນ ເພື່ອປະກອບສ່ວນໃນການໂຄສະນາເຜີຍແຜ່ຄວາມສຳຄັນຂອງກິລາໂອແລມປິກເຂົ້າໃນການປົກປັກຮັກສາສັນຕິພາບໂລກ;

2. ແລກປ່ຽນຄະນະຜູ້ແທນ, ນັກວິຊາການ, ຄູຝຶກ, ຜູ້ຊ່ຽວຊານດ້ານການກິລາກາຍະກຳ ແລະ ວິທະຍາສາດຕາມຂະແໜງການທີ່ກ່ຽວຂ້ອງ;
3. ແລກປ່ຽນບັນດາຂໍ້ມູນຂ່າວສານການກິລາຕ່າງໆ;
4. ເຊີນຜູ້ຊ່ຽວຊານຂອງທັງສອງຝ່າຍເຂົ້າຮ່ວມການສຳມະນາ, ເຂົ້າຮ່ວມກອງປະຊຸມ ກ່ຽວກັບວິທະຍາສາດການກິລາທີ່ຈັດຂຶ້ນໃນທຸກໆລະດັບ;
5. ເຂົ້າຮ່ວມກອງປະຊຸມແລະກິດຈະກຳກິລາດ້ານກິລາອື່ນໆ ທີ່ຈັດຂຶ້ນຢ່າງເປັນທາງການຢູ່ໃນແຕ່ລະປະເທດບົນພື້ນຖານຕາມການສະເໜີຂອງສະຫະພັນກິລາຂອງແຕ່ລະປະເທດ;
6. ເສີມຂະຫຍາຍການຮ່ວມມືໃນການຕ້ານການໃຊ້ສານກະຕຸ້ນ ແລະ ຄວາມບໍ່ມີນ້ຳໃຈນັກກິລາໃນຂົງເຂດກິລາຕ່າງໆ;
7. ຊຸກຍູ້ບັນດາສະມາຄົມກິລາ ແລະ ສະຖາບັນການກິລາຂອງທັງສອງປະເທດ ເພື່ອສ້າງສາຍສຳພັນໃນການແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານກິລາຕ່າງໆ; ແລະ
8. ການຮ່ວມມືໃນດ້ານອື່ນໆ ໃນຂະແໜງການກິລາຕາມທີ່ທັງສອງຝ່າຍໄດ້ຕົກລົງເຫັນດີ.

## ມາດຕາ03
## ການຈັດຕັ້ງປະຕິບັດ

1. ການຮ່ວມມືພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບນີ້ຈະຕ້ອງໄດ້ຖືກຈັດຕັ້ງປະຕິບັດໂດຍຜ່ານຮູບການຕົກລົງສະເພາະ, ແຜນການດຳເນີນງານ ຫຼື ໂຄງການ.
2. ການຮ່ວມມືທາງດ້ານກິດຈະກຳດ້ານກິລາຕ່າງໆ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ ຈະຕ້ອງອີງໃສ່ຄວາມອາດສາມາດໃນການສະໜອງທຶນຮອນ ແລະ ຈະຕ້ອງຖືກວິເຄາະ ແລະ ເຫັນດີໂດຍທັງສອງຝ່າຍ.

## ມາດຕາ04
## ສິດທິຊັບສິນທາງປັນຍາ

1. ຄູ່ສັນຍາແຕ່ລະຝ່າຍຈະຕ້ອງປົກປັກຮັກສາ, ສິດທິຊັບສິນທາງປັນຍາຂອງຄູ່ສັນຍາອີກຝ່າຍໜຶ່ງຢູ່ໃນດິນແດນຂອງຕົນ ໂດຍສອດຄ່ອງກັບກົດໝາຍທີ່ມີຜົນບັງຄັບໃຊ້ຢູ່ພາຍໃນປະເທດທີ່ກ່ຽວຂ້ອງ.
2. ກ່ຽວກັບ ບັນຫາທີ່ກ່ຽວຂ້ອງກັບແຜນການ ຫຼື ໂຄງການທີ່ພົວພັນກັບບັນຫາຊັບສິນທາງປັນຍາທັງສອງຝ່າຍເຫັນດີອອກຂໍ້ຕົກລົງສະເພາະເພື່ອໃຫ້ສອດຄ່ອງກັບລະບຽບຫຼັກການທີ່ເໝາະສົມ.

ມາດຕາ05

**ການກຳນົດພະນັກງານ**

ຄູ່ສັນຍາຈະຕ້ອງຮັບປະກັນວ່າ ພະນັກງານທີ່ເຂົ້າຮ່ວມໃນໂຄງການພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະບໍ່ເຂົ້າຮ່ວມໃນກິດຈະການການເມືອງໃດໆ ຫຼື ວຽກທຸລະກິດການຄ້າໃດໜຶ່ງນັບທັງການດຳເນີນກິດຈະກຳຕ່າງໆທີ່ຂັດກັບຈຸດປະສົງ ແລະ ເປົ້າໝາຍຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້.

ມາດຕາ06

**ການຮັກສາຄວາມລັບ**

1. ແຕ່ລະຝ່າຍຕ້ອງຮັກສາຄວາມລັບ ແລະ ປິດລັບບັນດາເອກະສານ, ຂ່າວສານ ແລະ ຂໍ້ມູນທີ່ຝ່າຍຕົນເອງໄດ້ຮັບ ຫຼື ໄດ້ສະໜອງໃຫ້ໂດຍຄູ່ສັນຍາໃນໄລຍະການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈສະບັບນີ້.
2. ຖ້າຝ່າຍໃດຝ່າຍໜຶ່ງຕ້ອງການເປີດເຜີຍຄວາມລັບຂອງເອກະສານ ຫຼື ຂໍ້ມູນຂ່າວສານ, ໃຫ້ຝ່າຍທີສາມຊາບ ຈະຕ້ອງໄດ້ຮັບການເຫັນດີຈາກຄູ່ສັນຍາອີກຝ່າຍໜຶ່ງສາກ່ອນ.
3. ທັງສອງຝ່າຍໄດ້ຕົກລົງເອກະພາບນຳກັນວ່າ ເນື້ອໃນຂອງມາດຕານີ້ຍັງຈະສືບຕໍ່ມີຜົນບັງຄັບໃຊ້ໄດ້ຮັກສາໄວ້ ເຖິງແມ່ນວ່າອາຍຸການນຳໃຊ້ບົດບັນທຶກຄວາມເຂົ້າໃຈສະບັບນີ້ໄດ້ສິ້ນສຸດລົງ ແລ້ວກໍ່ຕາມ.

ມາດຕາ07

**ການດັດແກ້**

ບົດບັນທຶກຄວາມເຂົ້າໃຈສະບັບນີ້ ສາມາດດັດແກ້ເນື້ອໃນໄດ້ ໂດຍການຕົກລົງເຫັນດີເປັນລາຍລັກອັກສອນຂອງຄູ່ສັນຍາ. ການດັດແກ້ຈະຕ້ອງເປັນພາກສ່ວນໜຶ່ງຂອງບົດບັນທຶກຄວາມເຂົ້າໃຈສະບັບນີ້.

ມາດຕາ08

**ການແກ້ໄຂຂໍ້ຂັດແຍ່ງ**

ທຸກໆຂໍ້ຂັດແຍ່ງທີ່ເກີດຂື້ນ ຊຶ່ງມາຈາກການແປຄວາມໝາຍ ຫຼື ການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະຕ້ອງໄດ້ຮັບການແກ້ໄຂແບບເພື່ອນມິດດ້ວຍການເຈລະຈາ ແລະ ການປຶກສາຫາລື ລະຫວ່າງ ສອງຝ່າຍ.

**ມາດຕາ09**

**ການມີຜົນບັງຄັບໃຊ້, ກຳນົດເວລາ ແລະ ການສິ້ນສຸດ**

1. ບົດບັນທຶກຄວາມເຂົ້າໃຈສະບັບນີ້ມີຜົນບັງຄັບໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.
2. ບົດບັນທຶກຄວາມເຂົ້າໃຈສະບັບນີ້ຈະມີຜົນບັງຄັບໃຊ້ໃນໄລຍະ 5 ປີ ແລະ ຈະສືບຕໍ່ມີຜົນບັງຄັບໃຊ້ອີກ 5 ປີ ເວັ້ນເສຍແຕ່ວ່າຄູ່ສັນຍາຝ່າຍໃດໜຶ່ງ ຈະແຈ້ງໃຫ້ຄູ່ສັນຍາອີກຝ່າຍໜຶ່ງຊາບເປັນລາຍລັກອັກສອນ ກ່ຽວກັບ ເຈດຕະນາຂອງຕົນທີ່ຕ້ອງການຍົກເລີກບົດບັນທຶກຄວາມເຂົ້າໃຈສະບັບນີ້ລ່ວງໜ້າ 6 ເດືອນ ກ່ອນມື້ໝົດອາຍຸການນຳໃຊ້.
3. ການສິ້ນສຸດບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈະບໍ່ໃຫ້ມີການກະທົບໃດໆ ຕໍ່ກັບອາຍຸການ ຫຼື ໄລຍະຂອງບັນດາໂຄງການ ຫຼື ກິດຈະກຳທີ່ໄດ້ຕົກລົງກັນພາຍໃຕ້ບົດບັນທຶກຄວາມເຂົ້າໃຈສະບັບນີ້ ຈົນກວ່າໂຄງການ ຫຼື ກິດຈະກຳເຫຼົ່ານີ້ຈະປະຕິບັດສຳເລັດ.

ເພື່ອເປັນຫຼັກຖານ, ຕາງໜ້າຂອງແຕ່ລະຝ່າຍ ຈຶ່ງໄດ້ລົງລາຍເຊັນໃສ່ບົດບັນທຶກຄວາມເຂົ້າໃຈສະບັບນີ້ນຳກັນ.

ເຮັດທີ່ ບາຫຼີ, ໃນວັນທີ 25 ກຸມພາ 2011, ເປັນສອງສະບັບຕົ້ນ, ເປັນພາສາລາວ, ພາສາອິນໂດເນເຊຍ ແລະ ພາສາອັງກິດ, ແຕ່ລະສະບັບນີ້ມີຄຸນຄ່າເທົ່າທຽມກັນ. ໃນກໍລະນີທີ່ມີການຕີຄວາມໝາຍ ແຕກຕ່າງກັນ, ສະບັບພາສາອັງກິດຈະໃຊ້ເປັນບ່ອນອີງ.

ຕາງໜ້າ
ກະຊວງຊາວໜຸ່ມ ແລະ ກິລາ
ສາທາລະນະລັດ ອິນໂດເນເຊຍ

Signed

ພະນະທ່ານ ອັນດີ ອາ. ມາລາຣັງເງັງ
ລັດຖະມົນຕີວ່າການກະຊວງຊາວໜຸ່ມ ແລະ ກິລາ

ຕາງໜ້າ
ຄະນະກຳມະການກິລາ-ກາຍະກຳແຫ່ງຊາດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Signed

ພະນະທ່ານ ພູທອງ ແສງອາຄົມ
ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ,
ປະທານ ຄະນະກຳມະການກິລາ-ກາຍະກຳແຫ່ງຊາດ